## ຄຳຖາມ ເມື່ອໃດທີ່ວຽກທີ່ເດັກໆ ເຮັດ ຈະຖືກຈັດເປັນ “ ແຮງງານເດັກ”

ວຽກທີ່ເດັກເຮັດເປັນນິຍາມທີ່ກ້ວາງທີ່ລວມທັງດ້ານບວກ ແລະ ດ້ານລົບ ຄືທັງຮູບແບບທີ່ຮ້າຍແຮງທີ່ສຸດຂອງແຮງງານເດັກ ແລະ ວຽກທີ່ໃຫ້ຄຸນຕໍ່ເດັກທີ່ໄດ້ເອື້ອຕໍ່ພັດທະນາການຂອງເດັກ. ວຽກທັງຫຼາຍທີ່ເດັກອາຍຸບໍ່ເຖິງ 18 ປີ ເຮັດບໍ່ຈຳເປັນຕ້ອງຈັດເປັນ “ແຮງງານເດັກ” ສະເໝີໄປ. ມີຜູ້ເຍົານັບລ້ານຄົນທີ່ເຮັດວຽກທັງໄດ້ ແລະ ບໍ່ໄດ້ຮັບຄ່າຈ້າງ ຊຶ່ງວຽກເຫຼົ່ານັ້ນເໝາະສົມກັບໄວລຸ້ນ ແລະ ວຸດທິພາວະຂອງເດັກເຫຼົ່ານີ້. ເນື່ອງຈາກເດັກໆໄດ້ ຮຽນຮູ້ກ່ຽວກັບຄວາມຮັບຜິດຊອບໄດ້ຮັບການພັດທະນາທັກສະເພີ່ມພູນລາຍໄດ້ ແລະ ການຄອງຊີບທີ່ດີໃຫ້ແກ່ ຕົນເອງຫຼືຄອບຄົວຕະຫຼອດສິ່ງເສີມເສດຖະກິດຂອງປະເທດດ້ວຍ.

ແຮງງານເດັກເປັນຮູບແບບທີ່ບໍ່ອາດຍອມຮັບ ໄດ້ຂອງແຮງງານທີ່ເດັກເຮັດໂດຍເປັນວຽກທີ່ເຮັດໃຫ້ເດັກສ່ຽງຕໍ່ອັນຕະລາຍຫຼືການຖືກເອົາປຽບ. ອະນຸສັນຍາຫຼັກ 2 ສະບັບຂອງ ILO ເນັ້ນການກຳຈັດແຮງງານເດັກ ແລະ ການກຳນົດຂີດຂັ້ນລະຫ່ວາງແຮງງານ ເດັກ ( Child Labour ) ແລະ ວຽກທີ່ເດັກເຮັດ ( Child Work ) ຊຶ່ງໂດຍພື້ນຖານແລ້ວແຮງງານເດັກທີ່ຕ້ອງຖືກກຳຈັດໃຫ້ໝົດສິ້ນໄດ້ແບ່ງອອກເປັນ 3 ປະເພດຄື:

1. ແຮງງານຫຼືວຽກອັນຕະລາຍ ທີ່ເປັນໄພຕໍ່ທັງຮ່າງກາຍ, ຄວາມຄິດ ຫຼື ຈິດໃຈຂອງເດັກບໍ່ວ່າຈະເປັນເພາະ ພາບລັກສະນະຫຼືສະພາບຂອງວຽກທີ່ເຮັດ ທັງນີ້ນິຍາມຂອງວຽກອັນຕະລາຍຕ້ອງກຳນົດໂດຍກົດໝາຍ ຂອງປະເທດ ( ອະນຸສັນຍາສະບັບ 182 ).
2. ແຮງງານເດັກໃນຮູບແບບທີ່ຮ້າຍແຮງທີ່ສຸດ ຊຶ່ງລັກສະນະທີ່ປາດສະຈາກເງື່ອນໄຂ ແລະ ໄດ້ຮັບການຍອມຮັບຢ່າງເປັນສາກົນໂດຍມີຮູບແບບຂອງ ການຕົກເປັນທາດການຄ້າມະນຸດ, ການຂັດໜີ້ ແລະ ຮູບແບບອື່ນໆຂອງແຮງງານບັງຄັບ ການຈັດຫາແຮງງານ ໂດຍ

ບັງຄັບເພື່ອໃຊ້ໃນການສູ້ຮົບ, ໂສເພນີ ແລະ ສື່ລາມົກອະນາຈານ ແລະ ກິດຈະກຳທີ່ຜິດກົດໝາຍຕ່າງໆ (ອະນຸສັນຍາສະບັບທີ 182).
3. ແຮງງານຂອງເດັກອາຍຸຕ່ຳກ່ວາເກນທີ່ ກຳນົດໄວ້ສຳລັບວຽກນັ້ນໆ ແລະ ມີແນວໂນ້ມທີ່ຈະຂັດຂວາງ ການສຶກສາ ແລະ ການພັດທະນາຢ່າງເຕັມທີ່ຂອງເດັກ (ອະນຸສັນຍາສະບັບ 138).

ອະນຸສັນຍາຂອງ ILO ຊ່ວຍເນັ້ນຄວາມສົນໃຈໃນຮູບແບບຂອງແຮງງານເດັກທີ່ຈະ ຕ້ອງມີການດຳເນີນການ ໂດຍເລັ່ງລັດເປັນພິເສດ ທັງນີ້ສະຫວັດດີການຂອງເດັກ ແລະ ການເຄົາລົບຕໍ່ສິດທິໃນຖານະຂອງເດັກເປັນ ກະແຈຂອງເລື່ອງນີ້.

**ຄຳຖາມ ບັນຫາຢູ່ໃສ**

ມັກຈະເຊື່ອກັນວ່າແຮງງານເດັກເປັນບັນຫາທີ່ປະສົບສະເພາະປະເທດກຳລັງພັດທະນາເທົ່ານັ້ນ. ຂະນະທີ່ເດັກຈຳນວນຫຼາຍ ແລະ ເປັນສ່ວນໃຫຍ່ທີ່ເຮັດວຽກໃນລັກສະນະ ຂອງແຮງງານເດັກຢູ່ໃນປະເທດ ກຳລັງພັດທະນາ ແຕ່ພົບວ່າມີແຮງງານເດັກໃນປະເທດອຸດສະຫະກຳ ແລະ ປະເທດເສດຖະກິດປ່ຽນຜ່ານ ເຊັ່ນກັນ. ການຄາດຄະເນຄັ້ງໃໝ່ຂອງ ILO ເມື່ອປີ 2002 ລະບຸວ່າເກືອບ 3% ຂອງເດັກໆໃນກຸ່ມອາຍຸ 10-14 ປີໃນເສດຖະກິດພັດທະນາແລ້ວໄດ້ມີສ່ວນຮ່ວມໃນທາງເສດຖະກິດ ແລະ ມີພຽງກ່ວາ 4% ເທົ່າ ນັ້ນໃນປະເທດ ເສດຖະກິດປ່ຽນຜ່ານ.

ອັດຕາສ່ວນ ແລະ ຄວາມເລິກຂອງບັນຫາຮຸນແຮງທີ່ສຸດໃນປະເທດກຳລັງພັດທະນາ ໂດຍມີເດັກເຖິງ 127.3 ລ້ານຄົນເຮັດວຽກໃນພູມິພາກອາຊີປາຊີຟິກຄິດໄລ່ເປັນ 16% ຂອງຈຳນວນປະຊາກອນເດັກຂອງພູມິພາກນີ້ ແລະ 60% ຂອງເດັກທີ່ເຮັດວຽກທົ່ວໂລກ ໂດຍຕາມມາດ້ວຍອາຟຼິກກາຕອນໃຕ້ມີແຮງງານເດັກ 48 ລ້ານຄົນ ຫຼື 29% ຂອງປະຊາກອນເດັກ ຂອງພູມິພາກນີ້.

**ຄຳຖາມ ມີແຮງງານເດັກໃນພາກເສດຖະກິດໃດແດ່**

ກົງກັນຂ້າມກັບການເນັ້ນຄວາມສົນໃຈ ຂອງສາທາລະນະຊົນໄປຫາເດັກທີ່ເຮັດວຽກໃນການຜະລິດເພື່ອການສົ່ງອອກ ແລະ ການທ່ອງທ່ຽວທາງເພດ ກັບມີເດັກພຽງ 5% ເທົ່ານັ້ນເຮັດວຽກໃນເສດຖະກິດເພື່ອການສົ່ງ ອອກ ແລະ ທຸລະກິດທາງເພດ ໂດຍມີລູກຄ້າເປັນ ຄົນໃນປະເທດນັ້ນໆ ແທນທີ່ຈະເປັນຄົນຕ່າງຊາດ. ເດັກສ່ວນໃຫຍ່ເຖິງ 70% ທີ່ເຮັດວຽກໃນ ປະເທດກຳລັງພັດທະນາເຮັດໃນພາກກະສິກຳ, ປະມົງ, ການລ່າ ສັດ ແລະ ປ່າໄມ້. ມີບໍ່ເຖິງ 9% ທີ່ເຮັດວຽກໃນພາກການຜະລິດ ແລະ ໃນສັດສ່ວນເທົ່າກັນໃນວຽກພາກການ ຄ້າສົ່ງ, ການຄ້າຍ່ອຍ, ພັດຕະຄານ ແລະ ໂຮງແຮມ ຕາມມາດ້ວຍ 6.5% ໃນວຽກບໍລິການໃນຊຸມຊົນ, ສັງຄົມ ແລະ ສ່ວນບຸກຄົນລວມທັງວຽກເຮືອນ ແລະ 4% ໃນວຽກຂົນສົ່ງ, ການເກັບ ຮັກສາເຄື່ອງ ແລະ ສື່ສານ ປະມານ 3% ຂອງເດັກເຮັດວຽກກໍ່ສ້າງເໝືອງແຮ່ ແລະ ເໝືອງຫີນ.

**ຄຳຖາມ ມີແຮງງານເດັກຈັກຄົນທີ່ເປັນແຮງງານເດັກ.**

ການປະມານການຂອງໂລກຄັ້ງໃໝ່ຂອງປີ ຄ.ສ.2002 ລະບຸວ່າມີເດັກປະມານ 352 ລ້ານຄົນເຮັດວຽກຢູ່ໃນ. ຈຳນວນນີ້ 246 ລ້ານຄົນເປັນແຮງງານເດັກທີ່ຕ້ອງກຳຈັດໃຫ້ໝົດໄປ ແລະ ໃນກຸ່ມນີ້ມີ 187 ລ້ານຄົນອາຍຸ ລະຫວ່າງ 5-14 ປີ ມີປະມານ 180 ລ້ານຄົນ ເຮັດໃນຮູບແບບທີ່ຮ້າຍແຮງທີ່ສຸດ ໂດຍມີບໍ່ນ້ອຍກ່ວາ 8 ລ້ານ ຄົນເຮັດວຽກໃນຮູບແບບ ທີ່ຮ້າຍແຮງທີ່ສຸດປະເພດໂສເພນີ, ແຮງງານບັງຄັບ ແລະ ສົງຄາມ.

**ຄຳຖາມ ເປັນຫຍັງຈິ່ງມີແຮງງານເດັກ ແລະ ແມ່ນຫຍັງຄືສາເຫດຂອງແຮງງານເດັກ.**

ແຮງງານເດັກເປັນທັງສາເຫດ ແລະ ຜົນລັບຂອງຄວາມຍາກຈົນ. ຄວາມຍາກຈົນໃນຄົວເຮືອນຊຸກຍູ້ໃຫ້ ເດັກຕ້ອງເຂົ້າສູ່ຕະຫຼາດແຮງງານເພື່ອຫາລາຍໄດ້ເສີມໃຫ້ແກ່ຄອບຄົວ ຫຼືເພື່ອການປະທັງຊີບຂອງຕົນເອງ. ການມີແຮງງານເດັກເຮັດໃຫ້ ຄວາມຍາກຈົນໃນ ຄົວເຮືອນສືບຕໍ່ກັນໄປຫຼາຍຊົ່ວອາຍຸ ຫລຸດຜ່ອນຄວາມເຕີບໂຕ ທາງເສດຖະກິດ ແລະ ການພັດທະນາສັງຄົມ ແລະ ຍັງຂັດຂວາງເດັກຈາກການໄດ້ຮັບການສຶກສາ ແລະ ທັກສະທີ່ຈະຊ່ວຍ ນຳໄປສູ່ໄວຜູ້ໃຫຍ່ທີ່ມີໂອກາດໃນການເຮັດວຽກທີ່ມີຄຸນຄ່າ.

ເຖິງຢ່າງໃດກໍ່ຕາມ ຄວາມ ຍາກຈົນບໍ່ ແມ່ນເປັນພຽງສາເຫດດຽວ ເທົ່ານັ້ນຍັງມີອີກຫຼາຍ ປັດໃຈທີ່ກ່ຽວຂ້ອງທີ່ກໍ່ໃຫ້ເກີດແຮງງານເດັກໄດ້ແກ່ ຄວາມບໍ່ສະເໝີພາບກັນ, ການຂາດການ

ສຶກສາ, ການພຶ່ງພາຢ່າງສູງຕໍ່ວຽກກະເສດໃນພາກເສດຖະກິດໂດຍ ລວມການປ່ຽນແປງ ທີ່ຊັກຊ້າຂອງປະຊາກອນ. ລັດທິການບໍລິໂພກນິຍົມລວມທັງການຄາດຫວັງທາງຂະນົບທຳນຽມ ແລະ ວັດທະນາທຳ ນອກຈາກນີ້ອາຍຸ, ເພດ, ຊົນຊາດ, ຊົນຊັ້ນທາງສັງຄົມ ແລະ ຄວາມຂາດແຄນ ລ້ວນມີປະຕິສຳພັນ ແລະ ມີຜົນກະທົບຕໍ່ປະເພດ ແລະ ຄວາມເຂັ້ມຂົ້ນ ຂອງວຽກທີ່ເດັກໆເຮັດຕະຫຼອດຈົນ ການທີ່ເດັກຈະເຮັດວຽກຫຼືບໍ່.

ການຕັດສິນໃຈຂອງຄອບຄົວກ່ຽວກັບແຮງງານເດັກໄດ້ຮັບອິດທິພົນຈາກຂະໜາດ ແລະ ໂຄງສ້າງ ຂອງຄອບຄົວ (ເຊັ່ນ:ຈຳນວນ, ເພດ, ອາຍຸ, ໄລຍະຫ່າງ ແລະ ລຳດັບການເກີດຂອງເດັກ, ການມີສະມາຊິກໃນຄົວເຮືອນທີ່ສາລາພາບ ຫຼື ພິການຈຳນວນຜູ້ໃຫຍ່ໃນໄວເຮັດວຽກ) ຍິ່ງກ່ວານັ້ນ ຈຳນວນທີ່ເພີ່ມຂື້ນ ຂອງຄົວເຮືອນທີ່ມີປູ່ຍ່າຕາຍາຍ ແລະ ເດັກເປັນຫົວໜ້າຄອບຄົວ (ສ່ວນຫຼາຍຈະສຳພັນກັບເອັສໄອວີ/ເອດ ແລະ ສົງຄາມ) ຈະຍິ່ງເພີ່ມແຮງ ກົດດັນໃຫ້ເດັກຕ້ອງເຮັດວຽກ.

ມີຫຼາຍຄຳອະທິບາຍທີ່ສຳພັນກັບເລື່ອງແຮງງານເດັກ ຊຶ່ງບໍ່ອາດໃຊ້ພຽງຄຳອະທິບາຍ ດຽວຕໍ່ການມີຢູ່ ແລະ ການເພີ່ມຂື້ນຂອງແຮງງານເດັກ, ແຮງງານເດັກເປັນເລື່ອງຂອງໂອກາດ ເດັກຈາກຄອບຄົວຍາກຈົນອາດບໍ່ມີ ທາງເລືອກທີ່ຈະໄປໂຮງຮຽນ. ເດັກຜູ້ຍິງອາດຖືກປະຕິເສດໂອກາດດັ່ງກ່າວເພາະສັງຄົມຄາດຫວັງວ່າພວກເຂົາຕ້ອງເຮັດວຽກເຮືອນ ແລະ ນີ້ຄືວິຖີຊີວິດທີ່ມາຈາກສາເຫດທີ່ແຕກຕ່າງກັນ, ມີລະດັບທີ່ແຕກຕ່າງກັນສະຕິ ສຳພັນທີ່ມີຕໍ່ກັນຈະເປັນຕົວກຳນົດວ່າເດັກແຕ່ລະຄົນຈະກາຍມາເປັນແຮງງານເດັກຫຼືບໍ່.

ປະສົບການຊີ້ວ່າຄວາມເຊື່ອມໂຍງຂອງການເຕີບໂຕທາງເສດຖະກິດ, ການເຄົາລົບຕໍ່ ມາດຕະຖານແຮງງານ, ການສຶກສາພື້ນຖານ ແລະ ການຄຸ້ມຄອງທາງສັງຄົມ ລວມທັງຄວາມເຂົ້າໃຈອັນດີກ່ຽວກັບຄວາມຈຳເປັນ ແລະ ສິດທິຂອງເດັກຊ່ວຍພິກຜັນໃຫ້ສາເຫດທີ່ແຕກຕ່າງກັນເຫຼົ່ານີ້ນຳມາຊຶ່ງສິ່ງທີ່ດີກ່ວານີ້ໄດ້.

**ຄຳຖາມ ເປັນຫຍັງຈຶ່ງມີແຮງງານເດັກ ແລະ ແມ່ນຫຍັງຄືສາເຫດຂອງແຮງງານເດັກ.**

ການດຳເນີນການເພື່ອຕໍ່ສູ້ກັບແຮງງານເດັກຂອງອົງການນີ້ມີຮາກຖານມາຈາກມາດຕະຖານ ແຮງງານລະ ຫວ່າງປະເທດຂອງ ILO (ອະນຸສັນຍາສະບັບທີ່ 138 ແລະ 182 ເປັນຫຼັກ) ແລະໄດ້ຮັບການເສີມພະລັງຈາກກອບວຽກທີ່ກຳນົດໂດຍປະກາດວ່າດ້ວຍຫຼັກການ ແລະ ສິດທິຂັ້ນພື້ນຖານໃນການເຮັດວຽກ.

ການສົ່ງເສີມ ມາດຕະຖານແຮງງານດ້ານແຮງງານເດັກ ແລະ ການກຳກັບກວດສອບ ການປະຕິບັດຂອງປະເທດຕ່າງໆທີ່ ໃຫ້ສັດຕະຍາບັນເປັນວິທີການທີ່ໂດດເດັ່ນຂອງ ILO ໃນການແກ້ໄຂບັນຫາໃນຊ່ວງຫຼາຍປີທີ່ຜ່ານມາ. ພາບສະທ້ອນຈາກວຽກ ດັ່ງກ່າວຄື: ໃນປະຈຸບັນນີ້ກົດໝາຍຂອງປະເທດສະມາຊິກຈຳນວນຫຼາຍກຳນົດປະເພດຂອງວຽກຫ້າມສຳລັບຜູ້ທີ່ອາຍຸບໍ່ເຖິງອາຍຸຂັ້ນຕ່ຳ. ILO ປະກອບກັບໂຄງການລະຫວ່າງປະເທດວ່າດ້ວຍການແກ້ໄຂບັນຫາແຮງງານເດັກ (ILO/IPEC) ເລີ່ມຂື້ນເມື່ອປີ ຄ.ສ 1992. ໃນເດືອນທັນວາ 2001 ໄດ້ມີການດຳເນີນວຽກໂຄງການພາຍໃຕ້ແຜນງານດັ່ງກ່າວເປັນມູນຄ່າກ່ວາ 200 ລ້ານໂດລາ. ລາຍຈ່າຍຂອງໂຄງການ ຄວາມຮ່ວມມືທາງວິຊາການຫຼາຍກ່ວາ 33 ລ້ານໂດລາ ໃນປີ ຄ.ສ 2001. ຈຳນວນ ແລະ ພາຄີຂອງຜູ້ຮ່ວມ ງານໃນໂຄງການ IPEC ຂະຫຍາຍວົງກ້ວາງໃນຊ່ວງຫຼາຍປີທີ່ຜ່ານມາ ໂດຍໃນຂະນະນີ້ຄວບຄຸມທັງພາກລັດ, ອົງການນາຍຈ້າງ ແລະ ລູກຈ້າງ, ທຸລະກິດສ່ວນຕົວ, ອົງກອນຊຸມຊົນ, ອົງກອນເອກະຊົນ, ສື່ມວນຊົນ, ສະມາຊິກລັດຖະສະພາ, ສານ, ກຸ່ມສາດສະໜາ ແລະ ທີ່ແນ່ນອນຄືເດັກ ແລະ ຄອບຄົວຂອງເດັກ ມີອົງກອນ ເອກະຊົນເກືອບ 150 ອົງກອນທົ່ວໂລກກຳລັງເຮັດວຽກກັບ IPEC ຊຶ່ງເປັນແຜນງານປະຕິບັດການທີ່ໃຫຍ່ທີ່ສຸດພຽງແຜນງານດຽວຂອງ ILO.

ແນວທາງການເຮັດວຽກຂອງ IPEC ໄດ້ແກ່ການກຳນົດລັກສະນະ ແລະ ຂອບເຂດຂອງແຮງງານເດັກ. ວາງນະໂຍບາຍ ແລະ ກົດໝາຍຄຸ້ມຄອງຂອງປະເທດກຳນົດກົນໄກເພື່ອຈັດໃຫ້ມີການເຮັດວຽກໃນລະດັບປະເທດ ແລະ ການປະຕິບັດການຕາມແຜນງານຂອງປະເທດ ແລະ ສ້າງຈິດສຳນຶກໃນຊຸມຊົນ ແລະ ສະຖານທີ່ເຮັດວຽກ, ຈາກການສະສົມປະສົບການກັບໂຄງການໃນລະດັບພູມິພາກ ແລະ ລະດັບຊາດການເຮັດວຽກຂັ້ນຕໍ່ໄປຂອງ IPEC ຄືແຜນງານພາຍໃຕ້ຂໍ້ກຳນົດຂອງເວລາ (Time-Bound Programmes) ທີ່ເຊື່ອມໂຍງແນວທາງທີ່ເນັ້ນພື້ນທີ່ ແລະ ກຸ່ມເປົ້າໝາຍພາກທຸລະກິດ ໂດຍປະສານກັບ ການເຮັດວຽກ ຕໍ່ຕ້ານ

ແຮງງານເດັກ. ໃນຍຸດທະສາດການພັດທະນາຂອງປະເທດ ໂດຍສະ ເພາະຢ່າງຍິ່ງການແກ້ໄຂບັນຫາຄວາມຍາກຈົນ, ການສຶກສາ ແລະ ການສົ່ງເສີມການມີວຽກເຮັດງານທຳ.

**ຄຳຖາມ ແມ່ນໃຜທີ່ກ່ຽວຂ້ອງກັບຄວາມພະຍາຍາມຕໍ່ສູ້ກັບແຮງງານເດັກ.**

ການກຳຈັດແຮງງານເດັກໄດ້ກາຍເປັນປະເດັນສຳຄັນຂອງອົງການ ລະຫວ່າງປະເທດຫຼາຍແຫ່ງໃນຊ່ວງ ທົດສະວັດທີ່ຜ່ານມາ. ນອກຈາກການເຮັດວຽກໃນລະບົບໄຕພາຄີ ທັງອົງການນາຍຈ້າງ ແລະ ຄົນງານໄດ້ມີ ການເຮັດວຽກຂອງຕົນເອງກ່ຽວກັບແຮງງານເດັກ. ອົງການ ຂອງສະຫະປະຊາຊາດ ເຊັ່ນວ່າ UNICEF ກໍ່ມີແຜນງານຂອງຕົນເອງທີ່ກ່ຽວກັບແຮງງານ ເດັກ ຂະນະທີ່ອົງການອື່ນໆເຊັ່ນ: WTO, IOM, UNESCO, UNFPA ແລະ UNDCCP ໄດ້ມີສ່ວນຮ່ວມໃນໂຄງການຕ່າງໆທີ່ມີຜົນກະທົບໂດຍກົງຕໍ່ແຮງງານເດັກໂດຍ ອາໃສຄວາມຊຳນານພິເສດດ້ານຕ່າງໆຂອງຕົນ. ຫຼາຍຫຸ້ນສ່ວນງານໄດ້ມີການສະໜັບສະໜູນທີ່ສຳຄັນຕໍ່ການຕໍ່ສູ້ກັບແຮງງານເດັກເຊັ່ນວ່າ: ເດັກ ແລະ ຄອບຄົວ ອົງການເອກະຊົນທັງໃນລະດັບຊາດ ແລະ ລະດັບປະເທດ ອົງການຊຸມຊົນ, ສື່ມວນຊົນ, ກຸ່ມສາດສະໜາ ແລະ ມະຫາວິທະຍາໄລ ຊຶ່ງອົງການເອກະຊົນ ໄດ້ມີບົດບາດແຂ່ງຂັນໃນເລື່ອງນີ້ທັງໃນລະດັບທ້ອງຖິ່ນ ໂດຍສ່ວນຫຼາຍຈະຮ່ວມມືກັບໂຄງການ IPEC ແລະ ລະດັບລະຫວ່າງປະເທດ ໂດຍມີບົດບາດ ສຳຄັນໃນການພິທັກສິດທິ.